ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------------------

ສຳນັກງານນາຍົກລັດຖະມົນຕີ ເລກທີ 244/ນຍ

ນະຄອນຫຼວງວຽງຈັນ, ວັນທີ ໑-໐໙-໒໐໐໕

# ດຳລັດ

## ວ່າດ້ວຍການຮັບຮອງວັນສ້າງຕັ້ງ ກຳລັງປ້ອງກັນຄວາມສະຫງົບ

**********

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ການສະເໜີຂອງ ລັດຖະມົນຕີວ່າການ ກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 938/ປກສ, ລົງວັນທີ 26 ສິງຫາ 2005.

## ນາຍົກລັດຖະມົນຕີ ອອກດຳລັດ :

<u>ມາດຕາ 1:</u> ກຳນົດເອົາວັນທີ 05 ເມສາ 1961 ເປັນວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບ.

<u>ມາດຕາ 2:</u> ເມື່ອເຖິງວັນທີ 05 ເມສາ ຂອງທຸກໆປີ, ໃຫ້ກຳລັງປ້ອງກັນຄວາມສະຫງົບ ແລະ ປວງຊົນລາວ ໃນທົ່ວປະເທດ ຈັດຕັ້ງການລະນຶກ, ສະເຫຼີມສະຫຼອງວັນດັ່ງກ່າວ ຕາມສະພາບ ແລະ ເງື່ອນໄຂຕົວຈິງ.

<u>ມາດຕາ 3:</u> ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

<u>ມາດຕາ 4:</u> ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ